

ບ້ານທົ່ງປີ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ
ເບີໂທລະສັບ: 021 612 038
ເຟກເຟດບຸກ: Physical Education college

ປະຫວັດຄວາມເປັນມາ

- ໄລຍະທີ1 ປີ1978-1979 ໄດ້ເລີ່ມປະຕິບັດໜ້າທີ່ດຳເນີນການຮຽນ-ການສອນວິຊາຄູພະລະສຶກສາ ເຊິ່ງໃນເມື່ອກ່ອນເອີ້ນວ່າ: "ໂຮງຮຽນກາຍຍະສຶກສາກິລາຊັ້ນກາງວຽງຈັນ"ຢູ່ເດີ່ນກິລາແຫ່ງຊາດ(ເດີ່ນກິລາເຈົ້າອະນຸວົງໃນປະຈຸບັນ).
- ໄລຍະທີ2 ປີ1993 ກົມພະລະສຶກສາ ໄດ້ຖືກສ້າງຕັ້ງຂຶ້ນເພື່ອຮັບຜິດຊອບວຽກງານພະລະສຶກສາ-ກິລາໃນໂຮງຮຽນ ດ້ວຍເຫດຜົນດັ່ງກ່າວຈຶ່ງໄດ້ປ່ຽນຊື່"ໂຮງຮຽນກາຍຍະສຶກສາ-ກິລາ"ມາເປັນ"ໂຮງຮຽນສ້າງຄູພະລະສຶກສາ".
- ໄລຍະທີ3 ປີ2009 ໄດ້ຍົກຖານະຈາກໂຮງຮຽນສ້າງຄູພະລະສຶກສາມາເປັນວິທະຍາໄລພະລະສຶກສາ ຕາມຂໍ້ຕົກລົງຂອງລັດຖະມົນຕີ, ສະບັບເລກທີ1129/ສສ.09, ລົງວັນທີ28 ພຶດສະພາ 2009 ມາເຖິງປັດຈຸບັນ.

ພາລະບົດບາດ

ວິທະຍາໄລພະລະສຶກສາ ຂຽນດ້ວຍອັກສອນຫຍໍ້ "ວພສ" ເປັນກົງຈັກຈັດຕັ້ງວິຊາການໜຶ່ງທີ່ຂຶ້ນກັບຂະແໜງການທີ່ກ່ຽວຂ້ອງຕາມສາຍຕັ້ງ, ພາຍໃຕ້ການຊີ້ນຳ ຂອງກົມກິລາ ຊວນຊົນ, ພະລະ ແລະ ສິລະປະສຶກສາ ໂດຍປະສານງານສົມທົບດ້ານວິຊາການກັບກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ ເຊິ່ງໄດ້ຈັດຕັ້ງເຄື່ອນໄຫວຕາມຂໍ້ຕົກລົງ ສະບັບ 6091ເລກທີ27ພະຈິກ2020 ມີພາລະບົດບາດໃນການຈັດການຮຽນ-ການສອນ, ການກໍ່ສ້າງບຳລຸງ, ພັດທະນາຄູ, ນັກວິຊາການພະລະສຶກສາ-ກິລາເພື່ອຕອບສະໜອງໃຫ້ແກ່ສະຖານການສຶກສາ, ອົງກອນຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

ໂຄງປະກອບການຈັດຕັ້ງ

ກ. ໂຄງປະກອບກົງຈັກປະກອບມີ 4 ພະແນກ, 1 ພາກວິຊາ ແລະ 1 ສູນ

- ☞ ພະແນກບໍລິຫານ ແລະ ຈັດຕັ້ງພະນັກງານ.
- ☞ ພະແນກວິຊາການ ແລະ ພັດທະນາວິຊາຊີບ.
- ☞ ພະແນກຄຸ້ມຄອງ ແລະ ສົ່ງເສີມກິດຈະກຳນັກສຶກສາ.
- ☞ ພະແນກການເງິນ,ຕິດຕາມປະເມີນຜົນ ແລະ ປະກັນຄຸນນະພາບ.
- ☞ ພາກວິຊາຄູພະລະສຶກສາ.
- ☞ ສູນສຶກສາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ຂ. ໂຄງປະກອບບຸກຄະລາກອນ ແລະ ຕຳແໜ່ງງານ

- ☞ ຜູ້ອຳນວຍການ ຈຳນວນ 1 ຕຳແໜ່ງ.
- ☞ ຮອງອຳນວຍການ ຈຳນວນ 3 ຕຳແໜ່ງ.
- ☞ ຫົວໜ້າ-ຮອງພະແນກ ພາກ ແລະ ສູນ ຈຳນວນ 18 ຕຳແໜ່ງ.
- ☞ ພະນັກງານວິຊາການ-ຄູສອນ ຈຳນວນ 38 ຕຳແໜ່ງ.

ແຜນພັດທະນາວິທະຍາໄລ

ແຜນພັດທະນາວິທະຍາໄລພະລະສຶກສາແມ່ນການປະຕິບັດຕາມ 7 ຍຸດທະສາດ.

☞ ຍຸດທະສາດທີ1: ສົ່ງເສີມສ້າງໂຄງລ່າງພື້ນຖານ, ສະໂມສອນ, ສະຖານທີ່ ແລະ ສົ່ງອຳນວຍຄວາມສະດວກໃຫ້ແກ່ວຽກງານພະລະສຶກສາ.

☞ ຍຸດທະສາດທີ2: ສ້າງຄວາມເຂັ້ມແຂງວຽກງານພະລະສຶກສາທັງພາຍໃນ ແລະ ພາຍນອກ.

☞ ຍຸດທະສາດທີ3: ພັດທະນາ ແລະ ຍົກລະດັບບຸກຄະລາກອນພະລະສຶກສາ.

☞ ຍຸດທະສາດທີ4: ຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນ, ເຄື່ອນໄຫວກິດຈະກຳພະລະສຶກສາ ແລະ ສຶກສາປ້ອງກັນຊາດປ້ອງກັນຄວາມສະຫງົບ.

☞ ຍຸດທະສາດທີ5: ຕ້ານ ແລະ ສະກັດກັ້ນຢາເສບຕິດ ແລະ ປະກິດການຫຍໍ້ທໍ້ພາຍໃນວິທະຍາໄລພະລະສຶກສາ.

☞ ຍຸດທະສາດທີ6: ການພົວພັນຮ່ວມມືພາຍໃນ ແລະ ຕ່າງປະເທດກ່ຽວກັບວຽກງານພະລະສຶກສາ-ກິລາ.

☞ ຍຸດທະສາດທີ7: ການບໍລິຫານຄຸ້ມຄອງ, ກວດກາ ຕິດຕາມ ປະເມີນຜົນ ວຽກງານພະລະສຶກສາ-ກິລາ.

ການປະຕິບັດຫຼັກສູດ

ການປະຕິບັດການຮຽນ-ການສອນວິຊາພະລະສຶກສາ ຕາມໂຄງສ້າງຫຼັກສູດ ພາກທິດສະດີ 40% ແລະ ພາກປະຕິບັດ 60%

☞ ***ຫຼັກສູດປັດຈຸບັນມີ 3 ຫຼັກສູດດັ່ງນີ້:***

☞ ຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ ສາຂາຄູພະລະສຶກສາ-ກິລາ.

☞ ຫຼັກສູດຄູພະລະສຶກສາຕໍ່ເນື່ອງ ລະດັບປະລິນຍາຕີ.

☞ ຫຼັກສູດຄູພະລະສຶກສາ ລະດັບອະນຸປະລິນຍາ.

ວຽກງານການເມືອງ-ແນວຄິດ

☞ ວິທະຍາໄລພະລະສຶກສາຖືເອົາວຽກງານການເມືອງແນວຄິດເປັນສຳຄັນໃນການນຳພາ-ຊີ້ນຳຈັດຕັ້ງປະຊຸມສ່ອງແສງລາຍງານຢ່າງເປັນປົກກະຕິຈັດຕັ້ງ ແລະ ເຂົ້າຮ່ວມຮັບຟັງເຜີຍແຜ່ ມະຕິ ຄຳສັ່ງ, ປະທະກະຖາເລົ່າມູນເຊື້ອອັນສຳຄັນຕ່າງໆຂອງພັກ-ລັດ, ກະຕຸກຊຸກຍູ້ສົ່ງເສີມພະນັກງານ-ຄູສອນ ຍົກລະດັບວິຊາສະເພາະ ແລະ ທິດສະດີການເມືອງ-ການປົກຄອງເປັນແຕ່ລະໄລຍະ.

ວຽກງານວິຊາສະເພາະ

☞ ຈັດຝຶກອົບຮົມແນະນຳທັກສະການສອນໃຫ້ຄູສອນຊ່ວຍວິຊາພະລະສຶກສາໃນການແກ້ໄຂບັນຫາໂຮງຮຽນມັດທະຍົມທີ່ບໍ່ມີຄູພະລະສຶກສາ ແລະ ຕິດພັນກັບວຽກງານ 3 ສ້າງ ຂອບເຂດທົ່ວປະເທດ.

☞ ຊຸກຍູ້ ສົ່ງເສີມພະນັກງານ-ຄູສອນເຂົ້າຮ່ວມຝຶກອົບຮົມສ້າງຂີດຄວາມສາມາດດ້ານການຮຽນ-ການສອນເຕັກໂນໂລຊີ-ຂໍ້ມູນຂ່າວສານ (ICT) ພາຍໃນ ແລະ ພາຍນອກ.

☞ ຊຸກຍູ້ ສົ່ງເສີມພະນັກງານ-ຄູສອນ, ນັກສຶກສາ ເຂົ້າຮ່ວມຝຶກອົບຮົມກຳມະການຕັດສິນ ແລະ ການເຄື່ອນໄຫວວຽກງານຕ່າງໆທັງພາຍໃນ ແລະ ພາຍນອກ.

☞ ຊຸກຍູ້ ສົ່ງເສີມພະນັກງານ-ຄູສອນຂຽນບົດວິໄຈ ແລະ ບົດສຶກສາການສອນໃນການພັດທະນາດ້ານຄຸນນະພາບຂອງວິທະຍາໄລ ແລະ ບຸກຄະລາກອນ.

☞ ຊຸກຍູ້ ສົ່ງເສີມພະນັກງານ-ຄູສອນ ແລະ ນັກສຶກສາປະກອບສ່ວນເປັນກຳມະການ, ອະນຸກຳມະການຄູຝຶກ ແລະ ນັກກິລາ ໃນງານແຂ່ງຂັນກິລາລະດັບຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

ວຽກງານພົວພັນຕ່າງປະເທດ

☞ ການພົວພັນຮ່ວມມືກັບມະຫາວິທະຍາໄລກິລາ-ກາຍຍະກຳ ບັກນິງ ແລະ ມະຫາວິທະຍາໄລສ້າງຄູກິລາ-ກາຍຍະກຳ ຮ່າໂນ້ຍ ສສ ຫວຽດນາມ, ວິທະຍາໄລສ້າງຄູອະນຸບານ ຊິງຊິງ ສປຈີນ, ໂຄງການພັດທະນາວິທະຍາໄລ (TICA) ແລະ ປະເທດອື່ນໆ ຕາມເງື່ອນໄຂ.

ສະຖິຕິລະດັບວຸດທິການສຶກສາພະນັກງານ-ຄູສອນ

ຈຳນວນພະນັກງານຄູສອນ ແລະ ບໍລິຫານ

ຊັ້ນ	ຄູສອນ				ບໍລິຫານ		ລວມ
	ຮຽນຈົບ		ກຳລັງຮຽນ		ລວມ	ຍິງ	
	ລວມ	ຍິງ	ລວມ	ຍິງ			
ປະລິນຍາເອກ	1	-	-	-	-	-	1
ປະລິນຍາໂທ	22	4	3	2	-	1	22
ປະລິນຍາຕີ	17	11	-	-	7	7	24

ຕຳແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ

2022	2023	2024
7/1	7/5	11/3

